# ບົດຂ່າວ
# ພິທີມອບ-ຮັບໃບຢັ້ງຢືນ
# ລະບົບບໍລິຫານ ຄຸນນະພາບ ISO 9001:2015

ນະຄອນຫຼວງວຽງຈັນ, ວັນທີ: 14/12/2017

ວັນທີ 14 ທັນວາ 2017 ທີ່ ສຳນັກງານໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຈັດພິທີມອບ-ຮັບ **ໃບຢັ້ງຢືນລະບົບບໍລິຫານຄຸນນະພາບ ISO 9001:2015**. ເຊິ່ງການມອບ-ຮັບ ໃນຄັ້ງນີ້, ແມ່ນຕາງໜ້າມອບໂດຍ **ທ່ານ Pakasit Marksri, ຜູ້ຈັດການຝ່າຍຮັບຮອງມາດຕະຖານ ບໍລິສັດ SGS ປະເທດໄທ** ແລະ ຕາງໜ້າຮັບໂດຍ **ທ່ານ ພູຊົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ**. ເຂົ້າຮ່ວມເປັນສັກຂີພະຍານໂດຍ ຄະນະອຳນວຍການ, ຄະນະພະແນກ, ສູນ ແລະ ສາຂາ ພາຍໃນນະຄອນຫຼວງວຽງຈັນ ຂອງ ທຄຕລ, ຄະນະຜູ້ບໍລິຫານຈາກບໍລິສັດ SGS, ຕະຫຼອດຮອດພະນັກງານຂອງທັງສອງຝ່າຍ ແລະ ນັກຂ່າວ-ສື່ມວນຊົນຈາກຫລາຍພາກສ່ວນ ກໍໄດ້ເຂົ້າຮ່ວມເປັນສັກຂີພະຍານໃນຄັ້ງນີ້.




ຄຳວ່າ ISO ຫຼື International Organization For Standardization ຊຶ່ງຄວາມໝາຍໂດຍທົ່ວໄປແມ່ນອົງກອນລະຫວ່າງປະເທດ ວ່າດ້ວຍມາດຕະຖານສາກົນ, ISO 9001 ແມ່ນລະບົບຈັດການດ້ານຄຸນນະພາບ ທີ່ໝາຍເຖິງຜູ້ໃຫ້ບໍລິການໄດ້ຈັດຕັ້ງ ແລະ ຮັກສາລະບົບການໃຫ້ບໍລິການດ້ານຄຸນນະພາບທີ່ເປັນມາດຖານດຽວກັນ. ໂດຍມີຈຸດປະສົງໃນການຕອບສະໜອງຄວາມຕ້ອງການຂອງລູກຄ້າໃຫ້ດີຍິ່ງຂຶ້ນ ພ້ອມກັບປັບປຸງການບໍລິການໃຫ້ລູກຄ້າຂອງຕົນໄດ້ຮັບຄວາມເພິ່ງພໍໃຈຢ່າງຕໍ່ເນື່ອງ, ບົນພື້ນຖານການປະຕິບັດລະບຽບ, ຂໍ້ກຳນົດທາງດ້ານກົດໝາຍທີ່ກ່ຽວຂ້ອງຢ່າງສະໝໍ່າສະເໝີ.

ຜ່ານມາ ທຄຕລ ໄດ້ຮັບການຢັ້ງຢືນລະບົບບໍລິຫານຄຸນນະພາບ ISO 9001:2008 ໃນວັນທີ 26/11/2010, ໃນນັ້ນ ໃບຢັ້ງຢືນແມ່ນໄດ້ອອກໃຫ້ໃນຂົງເຂດການບໍລິການ ຂອງ ສູນບໍລິການ ແລະ ພະແນກບໍລິຫານທຶນ ແລະ ບໍລິການລະຫວ່າງປະເທດ, ສຳນັກງານໃຫຍ່, ຜ່ານການປະຕິບັດເງື່ອນໄຂມາດຖານ ISO ດັ່ງກ່າວ ກໍ່ເຫັນໄດ້ຈຸດດີຫຼາຍຢ່າງເຊັ່ນ:

- ຊ່ວຍເຮັດໃຫ້ການບໍລິການ ມີຂັ້ນຕອນການຈັດຕັ້ງປະຕິບັດທີ່ເປັນມາດຖານ ຊ່ວຍປ້ອງກັນຂໍ້ບົກຜ່ອງ ແລະ ງ່າຍຕໍ່ການກວດສອບ.
- ມີມາດຖານການປະຕິບັດງານ ທີ່ເປັນລາຍລັກອັກສອນ, ຊັດເຈນ, ເຂົ້າໃຈງ່າຍ.
- ຫຼຸດຜ່ອນຄ່າໃຊ້ຈ່າຍ ປະຢັດເວລາໃນການປະຕິບັດງານ ຫຼຸດຜ່ອນຂໍ້ຜິດພາດການບໍລິການທີ່ບໍ່ໄດ້ມາດຕະຖານ.
- ມີລະບົບໃນການເພີ່ມປະສິດທິພາບ ແລະ ຫຼຸດຈຳນວນແຮງງານ ຫຼຸດຜ່ອນບັນຫາການເຮັດວຽກທີ່ຊ້ຳຊ້ອນ.
- ທີ່ສຳຄັນແມ່ນເຮັດໃຫ້ ທຄຕລ ໄດ້ຮັບຄວາມໜ້າເຊື່ອຖື ແລະ ໄວ້ເນື້ອເຊື່ອໃຈ ຈາກລູກຄ້າທີ່ມາໃຊ້ບໍລິການ ແລະ ຈາກສັງຄົມຫຼາຍຂຶ້ນ.



ຍ້ອນເຫັນໄດ້ຈຸດດີດັ່ງກ່າວ, ມາຮອດທ້າຍປີ 2017 ທຄຕລ ໄດ້ຄົ້ນຄ້ວາເພື່ອ Update ເປັນ Version ໃໝ່ ຄື: ISO 9001:2015 ໂດຍ ບໍລິສັດ SGS ເປັນທີ່ປຶກສາໃນການດຳເນີນການ, ໂດຍຜ່ານການກວດສອບເງື່ອນໄຂຕ່າງໆ ແລະ ທຄຕລ ສາມາດຮັບໃບຢັ້ງຢືນ ISO 9001:2015 ໄດ້ໃນຄັ້ງນີ້.

**ຂ່າວໂດຍ: ຂະແໜງສົ່ງເສີມຜະລິດຕະພັນ ແລະ ການຕະຫຼາດ**

| | |
|---|---|
| **ສອບຖາມຂໍ້ມູນເພີ່ມເຕີມໂທ:** | **021 213200 ຕໍ່ 404/407** |
| **Facebook Fan Page:** | **BCEL Bank** |
| **Website:** | **www.bcel.com.la** |